ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 021 214 013-4

ເລກທີ 5392 /ກອຢ
ນະຄອນຫຼວງວຽງຈັນ, ວັນທີ 14 JUL 2023

## ໜັງສືແຈ້ງການ

**ຮຽນ:** ທ່ານ ຫົວໜ້າພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ທີ່ນັບຖື.
**ເລື່ອງ:** ການເຝົ້າລະວັງ ແລະ ການຕອບໂຕ້ການລະບາດພະຍາດໄຂ້ຍຸງລາຍ ແລະ ພະຍາດຄໍຕີບ.

- ອີງຕາມ ດຳລັດ ວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ 2922/ສທ, ລົງວັນທີ 21 ກັນຍາ 2016.
- ອີງຕາມ ການຊີ້ນຳ ຂອງການນຳກະຊວງສາທາລະນະສຸກໃນການເຝົ້າລະວັງ ແລະ ຕອບໂຕ້ການລະບາດພະຍາດໄຂ້ຍຸງລາຍ ແລະ ພະຍາດຄໍຕີບ ຕາມພາລະບົດບາດ ຄວາມຮັບຜິດຊອບຂອງຂະແໜງການ.
- ອີງຕາມ ສະພາບການລະບາດຂອງພະຍາດໄຂ້ຍຸງລາຍ ແລະ ຄໍຕີບ ຢູ່ບາງແຂວງຢູ່ ສປປ ລາວ ໃນປະຈຸບັນ.

ຢູ່ ສປປ ລາວ ມີການລະບາດຂອງບາງພະຍາດທີ່ໄດ້ກ່າວມາຂ້າງເທິງ ຢູ່ໃນບາງແຂວງ, ປະຊາຊົນສ່ວນໃຫຍ່ ເວລາເຈັບເປັນແມ່ນຈະໄປຊື້ຢາມາກິນເອງ ຕາມຮ້ານຂາຍຍ່ອຍຢາ ເຮັດໃຫ້ມີການນຳໃຊ້ຢາຊະຊາຍ ເຊິ່ງເປັນການປິ່ນປົວທີ່ບໍ່ຖືກຕ້ອງ ອາດພາໃຫ້ເກີດເຊື້ອຕ້ານຕໍ່ຢາ, ເສຍເງິນ, ເສຍເວລາ, ຂາດໂອກາດໃນການປິ່ນປົວທີ່ຖືກຕ້ອງ ຫຼື ອາດພາໃຫ້ເສຍຊີວິດ. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ບັນດາພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງ ຈົ່ງຊີ້ນຳ ຂະແໜງອາຫານ ແລະ ຢາແຂວງຂອງຕົນດັ່ງນີ້:

1. ໃຫ້ຂະແໜງອາຫານ ແລະ ຢາ ແລະ ຮ້ານຂາຍຍ່ອຍຢາ ເຜີຍແຜ່ຂໍ້ມູນຂ່າວສານທີ່ຖືກຕ້ອງໃຫ້ແກ່ສາທາລະນະຊົນຢ່າງທົ່ວເຖິງ ໃນເວລາເຈັບເປັນຕ້ອງໄປກວດ ແລະ ບົ່ງມະຕິພະຍາດຈາກແພດກ່ອນ, ບໍ່ຄວນຊື້ຢາກິນເອງ ພ້ອມທັງເຜີຍແຜ່ພະຍາດທີ່ກຳລັງລະບາດຢູ່ໃນຊຸມຊົນຕົນ ເພື່ອໃຫ້ເປັນເຈົ້າການ ແລະ ໃຫ້ການຮ່ວມມື ຕາມຫຼັກການຄວບຄຸມການລະບາດ.
2. ໃຫ້ຂະແໜງອາຫານ ແລະ ຢາເພີ່ມທະວີການຕິດຕາມ - ກ່າວເຕືອນ - ແນະນຳ ບັນດາຮ້ານຂາຍຍ່ອຍຢາ ທີ່ຢູ່ໃນຄວາມຮັບຜິດຊອບຂອງທ່ານ ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງ ສອດຄ່ອງຕາມຂໍ້ດຳລັດ ວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ 2922/ສທ, ລົງວັນທີ 21 ກັນຍາ 2016 ໃຫ້ເຄື່ອນໄຫວຕາມພາລະບົດບາດ ສິດ ແລະໜ້າຂອງຕົນທີ່ໄດ້ຮັບອະນຸຍາດ.
3. ການບໍລິການຂອງຮ້ານຂາຍຍ່ອຍຢາຕ້ອງປະຕິບັດຢ່າງສອດຄ່ອງຕາມຫຼັກການ ການຂາຍຍ່ອຍຢາທີ່ດີ ເປັນຕົ້ນ: ແນະນຳ ແລະ ໃຫ້ຂໍ້ມູນກ່ຽວກັບວິທີການນຳໃຊ້ຢາ, ສັບພະຄຸນ, ອາການຂ້າງຄຽງ ແລະ ຜົນສະທ້ອນຂອງຢາ, ການຂາຍຢາຕ້ານເຊື້ອ, ຢາອອກລິດຕໍ່ຈິດ-ປະສາດ ແລະ ໝວດຢາອັນຕະລາຍທີ່ໃຊ້ໃນການຄວບຄຸມຂອງແພດຕ້ອງຂາຍຕາມໃບສັ່ງແພດ ແລະ ອື່ນໆ.
4. ຫ້າມ ນຳໃຊ້ສະຖານທີ່ຮ້ານຂາຍຍ່ອຍຢາເປັນບ່ອນກວດພະຍາດ,ບົ່ງມະຕິ ແລະ ປິ່ນປົວຄົນເຈັບ, ຖ້າກວດພົບໃຫ້ກ່າວເຕືອນ, ຂຽນບົດບັນທຶກຮ່ວມກັນໄວ້ໃນປຶ້ມຕິດຕາມ ພ້ອມແນະນຳໃຫ້ຢຸດຕິການເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມພາລະບົດບາດ ໜ້າທີ່ຕົນ, ຖ້າພົບຄັ້ງຕໍ່ໄປໃຫ້ປະຕິບັດຕາມມາດຕະການທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຫວັງວ່າຈະໄດ້ຮັບຄວາມຮ່ວມມືໃນຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ຫົວໜ້າກົມ

ປອ. ດຣ. ບຸນຊູ ແກ້ວຫາວົງ